ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານ ໂພນພະເນົາ ວຽງຈັນ, ສປປລາວ ຕູ້ ປ.ນ 6821, ໂທຣ: (865-21) 451222,451116
ແຟັກ:451117
PHONPHANAO VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117
E-mail:Lcc@laocement.com,www.laocement.com

ເລກທີ: 051 /ບຊລ

ທີ່ນະຄອນຫຼວງວຽງຈັນ, ວັນທີ: 16 JAN 2024

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ຂອງຕະຫຼາດຫຼັກຊັບລາວ,
ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ.

ເລື່ອງ: ລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດ ຂອງບໍລິສັດ ປະຈຳໄຕມາດ 4 ປີ 2023.

- ຂໍ້ຕົກລົງວ່າດ້ວຍການຮັບຮອງບົດແຜນການປັບປຸງ ແລະ ຟື້ນຟູກິດຈະການຂອງບໍລິສັດຊີມັງ ລາວ ມະຫາຊົນ ສະບັບເລກທີ 1958/ກປຫ, ລົງວັນທີ 21/4/2022.
- ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ສະບັບລົງວັນທີ 30/12/2021

ບໍລິສັດ ຊີມັງລາວ ມະຫາຊົນ (ບລຊ) ຂໍຖືເປັນກຽດລາຍງານມາຍັງທ່ານເພື່ອຊາບກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ນັບແຕ່ບໍລິສັດໄດ້ ເຂົ້າສູ່ຂະບວນການຟື້ນກິດຈະການ ເຊິ່ງມີລາຍລະອຽດ ດັ່ງນີ້:

1. ບໍລິສັດ ບຊລ ໄດ້ສຳເລັດການດັດແກ້ໃບອະນຸຍາດລົງທຶນ ແລະປ່ຽນຂອບເຂດທຸລະກິດ, ຊື່ບໍລິສັດ ຈາກ ບໍລິສັດ ຊີມັງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ.
2. ບໍລິສັດ ບຊລ ໄດ້ສຳເລັດການອອກແບບແຜນການດັດແປງໂຮງງານໃນໄລຍະເບື້ອງຕົ້ນຕາມ ແຜນການ.
3. ສຳລັບວຽກງານການຊື້ຮຸ້ນຂອງບໍລິສັດ ຫຼັກຊັບລາວ-ຈີນ ຈຳກັດ ແລະ ຜູ້ຖືຮຸ້ນລາຍຍ່ອຍ ແມ່ນຢູ່ໃນ ຊ່ວງການກະກຽມການສະເໜີຊື້ຮຸ້ນຄາດວ່າຈະສຳເລັດພາຍໃນເດືອນ 3/2024.
4. ຄຽງຄູ່ກັນໄປຕາມໂຄງການກໍ່ສ້າງສວນສາທິດເສດຖະກິດອຸດສາຫະກຳທ່ອງທ່ຽວ ແລະ ວັດທະນະ ທຳ ເມືອງວັງວຽງ ທາງບໍລິສັດໄດ້ຕັ້ງໜ້າຜັນຂະຫຍາຍພັດທະນາທຸລະກິດດ້ານຕ່າງໆ, ຍາດເອົາ ໂອກາດ ການພັດທະນາ ໃຫ້ການພັດທະນາຂອງບໍລິສັດມີລັກສະນະຫຼາກຫຼາຍບຸກໜ້າບືນຕໍ່ກ້າວ ໄປຂ້າງໜ້າເຊັ່ນ:

- ໂຄງການກໍ່ສ້າງອາຄານສຳນັກງານໃຫຍ່ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໄດ້ເລີ່ມ ການກໍ່ສ້າງນັບຕັ້ງແຕ່ເດືອນ ເມສາ ປີ 2023 ມາຮອດປັດຈຸບັນນີ້ການໄດ້ສຳເລັດເປັນພື້ນຖານຕາມແຜນ ການກໍ່ສ້າງແລະໄດ້ສຳເລັດແລ້ວ 15 ຊັ້ນ, ມີທັງໝົດ 21 ຊັ້ນ ແລະ ເນື້ອ ທີ່ນຳໃຊ້ກວມ 22,600 ຕາແມັດ ມູນຄ່າການກໍ່ສ້າງ ມູນຄ່າທັງໝົດປະມານ **90,000,000 ຢວນ (ເກົ້າສິບ ລ້ານຢວນ)** ໂດຍແມ່ນບໍລິສັດກໍ່ສ້າງລົງທຶນເລກ 6 ຢູນານຈຳກັດເປັນຜູ້ຮັບ ເໝົາກໍ່ສ້າງ ແລະຄາດວ່າ ຈະເລັດພາຍໃນທ້າຍປີ 2024.
- ທາງກຸ່ມບໍລິສັດທ່ອງທ່ຽວໄດ້ສ້າງຕັ້ງບັນດາບໍລິສັດລູກຂຶ້ນຄື:

ບໍລິສັດ ສະໝຸນໄພຈິ່ງເຄີ (ລາວ) ຈຳກັດຜູ້ດຽວຈະດຳເນີນທຸລະກິດດ້ານກະສິກຳ, ການປູກຝັງພືດ ອຸດສາຫະກຳ ແລະ ຢາສະໝຸນໄພ ຖືການສ້າງໂອກາດເຮັດວຽກງານທຳ ແລະ ຊ່ວຍຊາວກະສິກອນຫຼຸດ ຜ່ອນຄວາມທຸກຍາກເປັນເປົ້າໝາຍ.

ບໍລິສັດ ກໍ່ສ້າງ ພັດທະນາ ຕົວເມືອງລາວ ຈຳກັດຜູ້ດຽວ ຈະດຳເນີນທຸລະກິດດ້ານການລະດົມທຶນ, ການລົງທຶນ, ການພັດທະນາ, ການກໍ່ສ້າງ, ການຄຸ້ມຄອງການດຳເນີນທຸລະກິດ ດ້ານພື້ນຖານໂຄງລ່າງ ຕົວ ເມືອງ ແລະ ໂຄງການສາທາລະນະຂອງລັດ, ການຜະລິດ ແລະ ຈຳໜ່າຍວັດສະດຸກໍ່ສ້າງປະເພດໃໝ່.

ບໍລິສັດ ສະຖາປັນແຜນການ ແລະການອອກແບບທ່ອງທ່ຽວ ແຫ່ງຊາດລາວ ຈຳກັດຜູ້ດຽວ ຈະ ດຳເນີນທຸລະກິດດ້ານການບໍລິການສຳຫຼວດອອກແບບເຄຫາສະຖານ ແລະຜັງເມືອງ, ບໍລິການສຳຫຼວດ ອອກແບບ ແລະກໍ່ສ້າງຂົວທາງ ແລະ ບໍລິການອອກແບບແຫຼ່ງທ່ອງທ່ຽວ.

ບໍລິສັດ ວັດສະດຸ ກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ ຈະດຳເນີນທຸລະກິດ ນຳເຂົ້າ-ວັດສະດຸ ອຸປະກອນຮັບໃຊ້ການກໍ່ສ້າງທຸກຊະນິດ, ເຄື່ອງຈັກຮັບໃຊ້ການກໍ່ສ້າງ ເພື່ອຈຳໜ່າຍພາຍໃນປະເທດ.

5. ບໍລິສັດສຳເລັດພິທີວາງສີລາລຶກ ຂອງໂຄງການກໍ່ສ້າງສວນສາທິດເສດຖະກິດອຸດສາຫະກຳທ່ອງທ່ຽວ ແລະ ວັດທະນະທຳ ວັງວຽງໃນວັນທີ 12 ມັງກອນ 2024.
6. ສຳລັບການຈ່າຍເງິນອຸດໜູນອອກການໃຫ້ອາດີດພະນັກງານ ຂອງບໍລິສັດ ແມ່ນໄດ້ຈ່າຍໄປແລ້ວ 65% ແລະອີກ 35% ຈະສຳເລັດພາຍໃນເດືອນ 1/2024 ນີ້.

ດັ່ງນັ້ນ, ຈຶ່ງລາຍງານມັງຍັງທ່ານເພື່ອຊາບ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່ ບໍລິສັດ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ເນຍເຫຼີຍ